**ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ**

ພວກເຮົາຢາກເຫັນໂລກນີ້ເຕັມໄປດ້ວຍຄວາມຫວັງ, ການໃຫ້ອະໄພ, ສັງຄົມມີຄວາມຍຸຕິທຳ, ຫຼຸດພົ້ນຈາກຄວາມທຸກຍາກ ແລະ ປະຊາຊົນດຳລົງຊີວິດຢູ່ຢ່າງປອດໄພ ແລະ ມີກຽດສັກສີ.

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

Lao Journalists Association

# ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ



ການວາງແຜນຮ່ວມກັນໃນການປັບຕົວຕໍ່ກັບການປ່ຽນແປງສະພາບດິນຟ້າອາກາດ.

## ແຜນທີ່

ທີ່ຕັ້ງໂຄງການ
ນະຄອນຫຼວງວຽງຈັນ

ພື້ນທີ່ເປົ້າໝາຍ
ຫຼວງພະບາງ, ຈຳປາສັກ



ໄລຍະເວລາ
ມີນາ 2023 - ກຸມພາ 2027

ຜູ້ໄດ້ຮັບຜົນປະໂຫຍດ
ທາງກົງ ຜູ້ຊາຍ ແລະ ແມ່ຍິງ 6,155 ຄົນ
ທາງອ້ອມ ຜູ້ຊາຍ ແລະ ແມ່ຍິງ 10,000 ຄົນ

ຄູ່ຮ່ວມງານ
ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກົມສື່ມວນຊົນ ແລະ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ

## ຄວາມເປັນມາຂອງ ໂຄງການ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ ແມ່ນໂຄງການໜຶ່ງທີ່ໄດ້ເຮັດວຽກກັບບັນດາສື່ມວນຊົນຂອງລັດ ແລະ ເອກະຊົນ ເພື່ອປັບປຸງທັກສະວິຊາຊີບຂອງນັກຂ່າວລາວ ໂດຍການເພີ່ມຄວາມຮູ້ທາງດ້ານສື່ດິຈິຕອລ ແລະ ຄວາມເຂົ້າໃຈກ່ຽວກັບສື່ແບບໃໝ່. ໂຄງການ ໄດ້ຮັບການສະໜັບສະໜູນຈາກ ໂຄງການ ພັດທະນາສີຂຽວຂອງສະຫະພາບ ເອີຣົບ ທີ່ໃຫ້ການສະໜັບສະໜູນນະໂຍບາຍໃນຂົງເຂດດ້ານການປັບຕົວ ແລະ ການຫຼຸດຜ່ອນຄວາມສ່ຽງຕໍ່ກັບດິນຟ້າອາກາດ, ການພັດທະນາເສດຖະກິດ-ສັງຄົມ ແບບຍືນຍົງ.

ໂຄງການ ຍັງໄດ້ເສີມຂະຫຍາຍການຮັບຮູ້ທາງດ້ານ ສື່ດິຈິຕອລ ແລະ ການພັດທະນາສີຂຽວ ເພື່ອເພີ່ມການເຂົ້າເຖິງຂໍ້ມູນຂ່າວສານ ການພັດທະນາທີ່ກ່ຽວຂ້ອງກັບບົດບາດທາງເພດ, ສິດທິຂອງຜູ້ອອກແຮງງານ ແລະ ການພັດທະນາຊຸມຊົນໃນ ສປປ ລາວ ທີ່ຕິດພັນກັບການພັດທະນາສີຂຽວແບບຍືນຍົງ. ໂຄງການຍັງຈະເສີມສ້າງການມີສ່ວນຮ່ວມ, ທັດສະນະຄະຕິ, ວິໄສທັດ ແລະ ຄວາມສາມາດຂອງນັກຂ່າວ ດ້ວຍການສຸມໃສ່ການນຳໃຊ້ສື່ຢ່າງເຂັ້ມແຂງ ເພື່ອສົ່ງເສີມການເຕີບໂຕສີຂຽວຂອງປະຊາຊົນ ໃນ ສປປ ລາວ.

ຜ່ານການຝຶກອົບຮົມ, ການປະຊຸມ, ການແຂ່ງຂັນ ແລະ ການເຮັດກິດຈະກຳຕ່າງໆ, ອົງການຈັດຕັ້ງທາງສັງຄົມລາວ, ນັກຂ່າວລາວ, ນັກສ້າງຮູບເງົາ, ຢູທູບເບີ້ ຈະໄດ້ຮັບການເສີມຂະຫຍາຍຄວາມຮູ້ຄວາມສາມາດ, ໃຫ້ພວກເຂົາໄດ້ມີສ່ວນຮ່ວມຢ່າງສ້າງສັນເຂົ້າໃນການວາງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.

## ຈຸດປະສົງຂອງ ໂຄງການ

ເພື່ອແກ້ໄຂຊ່ອງວ່າງທາງດ້ານຄວາມຮູ້ທາງສື່ສັງຄົມ, ປັບປຸງການຮູ້ທາງດ້ານສື່ດິຈິຕອລ ແລະ ຫຼຸດຜ່ອນຄວາມສ່ຽງຂອງ "ຂ່າວປອມ" ໂດຍການເສີມສ້າງຂີດຄວາມສາມາດຂອງນັກຂ່າວລາວຢູ່ ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ.

ເພື່ອເພີ່ມທະວີຄວາມຮັບຮູ້ກ່ຽວກັບບັນຫາສີຂຽວ ແລະ ການປ່ຽນແປງດິນຟ້າອາກາດໃນພື້ນທີ່ຊົນນະບົດຂອງ ສປປ ລາວ

## ຜູ້ໃຫ້ທຶນ

ສະຫະພາບ ເອີຣົບ

# ກິດຈະກຳ ຂອງໂຄງການ

- **ສື່ມວນຊົນຂອງລັດ ແລະ ສື່ພາກສັງຄົມທີ່ໄດ້ລົງທະບຽນຖືກຕ້ອງຕາມກົດໝາຍ ສປປ ລາວຈະໄດ້ຮັບການຍົກລະດັບທັກສະດ້ານວິຊາຊີບ ລວມທັງການນຳໃຊ້ເຕັກໂນໂລຊີແບບດິຈິຕອນ ແລະ ສື່ແບບໃໝ່, ເພື່ອເຮັດໃຫ້ປະຊາຊົນໄດ້ຮັບຂໍ້ມູນຂ່າວສານທີ່ມີຄຸນະພາບ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.**
  - ກິດຈະກຳທີ 1: ປະເມີນຄວາມສາມາດຂອງນັກຂ່າວ ແລະ ການອອກແບບແຜນການຝຶກອົບຮົມ
  - ກິດຈະກຳທີ 2: ພັດທະນາມາດຕະຖານຂ່າວສານຄຸນນະພາບສີຂຽວ
  - ກິດຈະກຳທີ 3: ຈັດການຝຶກອົບຮົມນັກຂ່າວປະຈຳປີ ເປັນເວລາ 2 ອາທິດ
  - ກິດຈະກຳທີ 4: ຈັດກອງປະຊຸມສຳມະນາ ເຊິ່ງນຳພາໂດຍນັກຂ່າວພາກພື້ນທີ່ໄດ້ຮັບເຊີນ
  - ກິດຈະກຳທີ 5: ແລກປ່ຽນ ແລະ ຝຶກອົບຮົມປະຕິບັດຕົວຈິງໃຫ້ນັກຂ່າວລາວ ຢູ່ປະເທດໄທ ແລະ ຫວຽດນາມ
  - ກິດຈະກຳທີ 6: ສ້າງເວັບໄຊ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ (LJA)
  - ກິດຈະກຳທີ 7: ຈັດທັດສະນະສຶກສາເພື່ອສ້າງຄວາມເຂົ້າໃຈໃຫ້ນັກຂ່າວກ່ຽວກັບໂລກະທັດຂອງຊຸມຊົນວ່າດ້ວຍບົດບາດຍິງ-ຊາຍ ຕໍ່ຄວາມສຳຄັນຂອງການພັດທະນາສີຂຽວ
  - ກິດຈະກຳທີ 8: ຈັດງານແຂ່ງຂັນຜະລິດຕະພັນສື່ສີຂຽວປະຈຳປີຂອງນັກຂ່າວລາວ

- **ອົງການຈັດຕັ້ງພາກສັງຄົມທີ່ກ່ຽວຂ້ອງກັບການພັດທະນາສີຂຽວ, ຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ, ຜູ້ສ້າງວິດີໂອ ແລະ ຮູບເງົາໄດ້ຍົກລະດັບຄວາມຮູ້ ແລະ ຄວາມສາມາດ ຂອງຕົນເອງໃນການປະກອບສ່ວນສ້າງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ວຽກງານການພັດທະນາສີຂຽວທີ່ມີຜົນກະທົບຕໍ່ຊຸມຊົນ. ລວມທັງການນຳໃຊ້ເຕັກໂນໂລຊີດິຈິຕອນ ແລະ ສື່ແບບໃໝ່ຢ່າງສ້າງສັນ.**
  - ກິດຈະກຳທີ 1: ຈັດຝຶກອົບຮົມກ່ຽວກັບການພັດທະນາສີຂຽວ, ການຮຽນຮູ້ສື່ດິຈິຕອນ, ສື່ແບບໃໝ່ ແລະ ການຄຸ້ມຄອງສື່ຂອງຕົນສຳລັບຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ
  - ກິດຈະກຳທີ 2: ອອກແບບຫຼັກສູດການຮຽນຮູ້ດ້ວຍຕົນເອງ ກ່ຽວກັບການພັດທະນາສື່ສີຂຽວ ແລະ ການຄຸ້ມຄອງສື່ຂອງຕົນເອງໃຫ້ກັບຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ ແລະ ໄວໜຸ່ມທີ່ກ່ຽວຂ້ອງ ທີ່ເຜີຍແຜ່ຂໍ້ມູນຂ່າວສານຄ້າຍຄືກັບອົງການສື່ມວນຊົນ ທັງ 3 ພາກ
  - ກິດຈະກຳທີ 3: ຈັດການແລກປ່ຽນ, ສຳມະນາ, ໃຫ້ຄວາມຮູ້ກ່ຽວກັບການພັດທະນາສີຂຽວ, ການຮຽນຮູ້ສື່ດິຈິຕອນ, ສື່ແບບໃໝ່ ແລະ ການຄຸ້ມຄອງສື່ຂອງຕົນເອງໃຫ້ແກ່ອົງການຈັດຕັ້ງພາກສັງຄົມທີ່ກ່ຽວຂ້ອງ
  - ກິດຈະກຳທີ 4: ອອກແບບການຈັດແຂ່ງຂັນຜະລິດຕະພັນສື່ກ່ຽວກັບການພັດທະນາສີຂຽວສຳລັບຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ
  - ກິດຈະກຳທີ 5: ຈັດການແຂ່ງຂັນຜະລິດຕະພັນສື່ດິຈິຕອນ, ສື່ແບບໃໝ່ກ່ຽວກັບການພັດທະນາສີຂຽວປະຈຳປີ ສຳລັບຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ

# ຄາດຄະເນຜົນໄດ້ຮັບ

- ນັກຂ່າວພາກລັດ ແລະ ສື່ພາກສັງຄົມທີ່ໄດ້ລົງທະບຽນຖືກຕ້ອງຕາມກົດໝາຍ ສປປ ລາວ ມີຄວາມຊຳນິຊຳນານໃນການເຜີຍແຜ່ຂໍ້ມູນຂ່າວສານການພັດທະນາສີຂຽວ (ການສ້າງເນື້ອໃນ) ທີ່ມີຄຸນນະພາບ, ຜ່ານສື່ດິຈິຕອນ.
- ນັກຂ່າວລາວຈາກພາກລັດ ແລະ ສື່ທີ່ໄດ້ລົງທະບຽນຖືກຕ້ອງຕາມກົດໝາຍ ສປປ ລາວ ຈະເປັນຜູ້ຜະລິດ ຜະລິດຕະພັນສື່ທີ່ມີຄຸນນະພາບ ແລະ ຊຸກຍູ້ການໂຄສະນາ-ເຜີຍແຜ່ ກ່ຽວກັບການພັດທະນາສີຂຽວ ທີ່ສອດຄ່ອງຕາມຫຼັກຈັນຍາບັນຂອງນັກຂ່າວ ແຫ່ງ ສປປ ລາວ.
- ຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ, ອົງການຈັດຕັ້ງມະຫາຊົນ ແລະ ໄວໜຸ່ມທີ່ກ່ຽວຂ້ອງ ຈະມີຄວາມເຂົ້າໃຈເພີ່ມຂຶ້ນກ່ຽວກັບການພັດທະນາສີຂຽວ ແລະ ຄວາມຮູ້ທາງດ້ານສື່ດິຈິຕອນ ແລະ ສື່ແບບໃໝ່.
- ບັນດາຜູ້ເຂົ້າຮ່ວມຈາກອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງພາກສັງຄົມ, ພົນລະເມືອງທົ່ວໄປ ແລະ ໄວໜຸ່ມທີ່ກ່ຽວຂ້ອງ ຈະຜະລິດ ຜະລິດຕະພັນສື່ກ່ຽວກັບການພັດທະນາສີຂຽວທີ່ຖືກຕ້ອງຕາມມາດຕະຖານຂ່າວສານຄຸນນະພາບສີຂຽວ ແລະ ຈັນຍາບັນຂອງນັກຂ່າວ ແຫ່ງ ສປປ ລາວ.



ການແລກປ່ຽນບົດຮຽນ ໃນການພັດທະນາແຜນພັດທະນາສີຂຽວ.


ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ
ຫ້ອງການ ນະຄອນຫຼວງວຽງຈັນ
ຕູ້ປ.ນ 4328, ຖະໜົນໜອງສ້າງທໍ່, ບ້ານ ໜອງສ້າງທໍ່,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (856-21) 217 727

ວຽງຈັນ ທາຍ
ຕູ້ປ.ນ 5723 ນະຄອນຫຼວງວຽງຈັນ, ສປປ ລາວ
ບ້ານ ໂພນປະເປົ້າ, ໜ່ວຍ 32, ເມືອງ ສີສັດຕະນາກ
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (856-21) 336040, 336042
ມືຖື: (856-20) 54915353
ແຟັກ: (856-21) 336041

Lao.Info@care.org
www.laja.la
www.careint.org.la
@LaoJournalistsAssociation
@careinlaos
CARE International in Lao PDR